# ເປີດກິດຈະກຳລະດົມທຶນບໍລິຈາກ

## ຊ່ວຍເຫຼືອຜູ້ປະສົບໄພພິບັດນ້ຳຖ້ວມ ປີ 2024 ຜ່ານລະບົບ BCEL OneHeart

ລະຫວ່າງ ຄະນະກຳມະການຄຸ້ມຄອງໄພພິບັດຂັ້ນສູນກາງ ແລະ ທະນາຄານການຄ້າຕ່າງປະເທດລາວມະຫາຊົນ
ນະຄອນຫຼວງວຽງຈັນ, ວັນທີ 14 ກັນຍາ 2024

ໃນວັນເສົາ ວັນທີ 14 ກັນຍາ 2024 ເວລາ 16:00 ໂມງ ທີ່ ສວນເຈົ້າອານຸວົງ ໄດ້ມີການຈັດພິທີຖະແຫລງຂ່າວ **ເປີດກິດຈະກຳລະດົມທຶນບໍລິຈາກຊ່ວຍເຫຼືອຜູ້ປະສົບໄພພິບັດນ້ຳຖ້ວມ ປີ 2024 ຜ່ານລະບົບ BCEL OneHeart** ຂຶ້ນຢ່າງເປັນທາງການ. ໃຫ້ກຽດຂຶ້ນຖະແຫລງຂ່າວໃນຄັ້ງນີ້ໂດຍ ທ່ານ ວົງຄຳ ພັນທະນຸວົງ ຫົວໜ້າກົມສັງຄົມສົງເຄາະ ຫົວໜ້າກອງເລຂາຄະນະກຳມະການຄຸ້ມຄອງໄພພິບັດ ຕາງໜ້າ ຄະນະກຳມະການຄຸ້ມຄອງໄພພິບັດຂັ້ນສູນກາງ ພາຍໃຕ້ການເຂົ້າຮ່ວມຂອງ **ທ່ານ ນາງ ສູນທອນ ໄຊຍະຈັກ** ຮອງປະທານສະພາແຫ່ງຊາດ, **ທ່ານ ນາງ ໃບຄຳ ຂັດທິຍະ** ລັດຖະມົນຕີ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, **ທ່ານ ນາງ ວັດທະນາ ດາລາລອຍ** ຮັກສາການຜູ້ວ່າການທະນາຄານ ແຫ່ງ ສປປ ລາວ, **ທ່ານ ນາງ ສາຍສະໝອນ ຈັນທະຈັກ** ຜູ້ອຳນວຍການ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ, ນອກນັ້ນ ກໍ່ຍັງມີບັນດາທ່ານຮອງລັດຖະມົນຕີ, ທ່ານຮອງເຈົ້າຄອງນະຄອນຫຼວງວຽງຈັນບັນດາຕາງໜ້າອົງການຈັດຕັ້ງມະຫາຊົນ, ທ່ານຜູ້ຕາງໜ້າສະພາອຸດສະຫະກຳການຄ້າ, ຕາງໜ້າອົງການຈັດຕັ້ງທາງສັງຄົມ ແລະ ສື່ມວນຊົນຈາກຫຼາຍພາກສ່ວນກໍ່ໄດ້ເຂົ້າຮ່ວມຢ່າງພ້ອມພຽງ.




ຈຸດປະສົງຂອງງານແມ່ນ ເພື່ອຖະແຫລງຂ່າວ ເປີດກິດຈະກຳລະດົມທຶນບໍລິຈາກຊ່ວຍເຫຼືອຜູ້ປະສົບໄພພິບັດນ້ຳຖ້ວມ ປີ 2024 ຜ່ານລະບົບ BCEL OneHeart ພາຍໃຕ້ຊື່ **"ໂຄງການຊ່ວຍເຫຼືອຜູ້ປະສົບໄພພິບັດ ປີ 2024"** ເພື່ອເປັນອີກຊ່ອງທາງໜຶ່ງ

ທີ່ໄວໃນການລະດົມທຶນຈາກສັງຄົມ, ບຸກຄົນ ແລະ ນິຕິບຸກຄົນ, ບໍລິສັດຫ້າງຮ້ານຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ ສາມາດຮ່ວມບໍລິຈາກໄດ້ໄດ້ຕະຫຼອດ 24 ຊົ່ວໂມງ ເພື່ອສົມທົບເຂົ້າໃນການຊ່ວຍເຫຼືອປະຊາຊົນ ບັນດາແຂວງທີ່ໄດ້ຮັບກະທົບຈາກໄພພິບັດ ປີ 2024 ໂດຍເລີ່ມເປີດນັບຕັ້ງແຕ່ ວັນທີ 14/09/2024 ເວລາ 15:30 ໂມງ ຈົນເຖິງ 30 ຕຸລາ 2024 24:00 ໂມງ, ໂຄງການດັ່ງກ່າວ ທຄຕລ ມີໜ້າທີ່ຮັບຜິດຊອບ ເປີດໂຄງການດ້ານລະບົບຂອງ BCEL OneHeart ພາຍຫຼັງປິດໂຄງການ ຄະນະກຳມະການຄຸ້ມຄອງໄພພິບັດຂັ້ນສູນກາງ ຮັບຜິດຊອບໃນການຈັດຕັ້ງປະຕິບັດ ນຳໃຊ້ເງິນຈາກລະບົບນີ້ໃຫ້ຖືກເປົ້າໝາຍ ຈັດສັນໃນການຊ່ວຍເຫຼືອຟື້ນຟູໃຫ້ແກ່ບັນດາແຂວງ ທີ່ໄດ້ຮັບຜົນກະທົບຈາກໄພພິບັດ ໃນປີ 2024 ຕາມຜົນການກະທົບໜັກຫຼາຍ, ໜັກໜ້ອຍ ໃຫ້ສາມາດຊ່ວຍໃຫ້ທົ່ວເຖິງຄົບທຸກແຂວງ ທີ່ໄດ້ຮັບຜົນກະທົບ ໂດຍມີການລາຍງານແຈ້ງໃຫ້ສັງຄົມຮັບຊາບ.

ເພື່ອສະແດງຄວາມຫ່ວງໄຍຈາກໃຈ ຕໍ່ຜູ້ປະສົບໄພທັງໝົດໃນຂອບເຂດທົ່ວປະເທດ ທະນາຄານການຄ້າຕ່າງປະເທດລາວມະຫາຊົນ (ທຄຕລ) ໄດ້ປະກອບສ່ວນເງິນຂອງ ທຄຕລ ຈຳນວນ 1.000.000.000 ກີບ (ໜຶ່ງຕື້ກີບ), ໃຫ້ແກ່ໂຄງການ OneHeart ຂອງຄະນະກຳມະການຄຸ້ມຄອງໄພພິບັດຂັ້ນສູນກາງ ຊື່ **"ໂຄງການຊ່ວຍເຫຼືອຜູ້ປະສົບໄພພິບັດ ປີ 2024"** ເພື່ອຊ່ວຍເຫຼືອຜູ້ປະສົບໄພພິບັດໃນຂອບເຂດທົ່ວປະເທດ. ນອກນັ້ນ; ສຳລັບຜູ້ບໍລິຈາກຢູ່ຕ່າງປະເທດ ທີ່ຮ່ວມບໍລິຈາກຊ່ວຍເຫຼືອຜ່ານໂຄງການດັ່ງກ່າວ ດ້ວຍບັດສາກົນ ເຊັ່ນ: UnionPay, VISA, Master Card, JCB ແລະ American Express (AMEX) ຜ່ານເວັບໄຊທ໌ www.oneheart.la ໂດຍ **ທຄຕລ ຈະຮັບຜິດຊອບຈ່າຍຄ່າທຳນຽມ 2,5%-4%** ຂອງຍອດບໍລິຈາກໃຫ້ກັບສູນບັດສາກົນ ໂດຍທີ່ຍອດບໍລິຈາກຂອງທ່ານຈະເຂົ້າໂຄງການເຕັມ 100%.




ພ້ອມດຽວກັນນີ້; ທຄຕລ ກໍ່ໄດ້ຕາງໜ້າສັງຄົມຜູ້ບໍລິຈາກມອບເງິນ ຜ່ານ ທີ່ສັງຄົມບໍລິຈາກຜ່ານ OneHeart ເພື່ອຊ່ວຍເຫຼືອຜູ້ປະສົບໄພພິບັດນ້ຳຖ້ວມທີ່ແຂວງຫຼວງນ້ຳທາ ໂດຍມອບຜ່ານອຳນາດການປົກຄອງແຂວງຫຼວງນ້ຳທາ ໃນວັນທີ 15/09/2024 ຢູ່ທີ່

ຫ້ອງວ່າການແຂວງຫຼວງນ້ຳທາ ຕາງໜ້າສັງຄົມມອບເງິນບໍລິຈາກ ໂດຍ **ທ່ານ ສາຍຈິດ ສີມມະວົງ** ຮອງຜູ້ອຳນວຍການທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຕາງໜ້າອຳນາດການປົກຄອງແຂວງ ຮັບໂດຍ **ທ່ານ ອ່ອນຈັນ ຄຳພາວົງ** ຮອງເຈົ້າແຂວງ ແຂວງຫລວງນ້ຳທາ. ລວມເງິນທີ່ສັງຄົມບໍລິຈາກທັງໝົດແມ່ນ **1.714.134.894,60 ກີບ** (ມີຜູ້ບໍລິຈາກທັງໝົດ **10.392 ຄັ້ງ**) ເຊິ່ງໂຄງການນີ້ແມ່ນໄດ້ເປີດນັບແຕ່ວັນທີ 10/09/2024 ເວລາ 13:30 ແລະ ປິດໂຄງການໃນວັນທີ 14/09/2024 ເວລາ 15:30 ນາທີ; ເພື່ອນຳໃຊ້ເຂົ້າໃນເປົ້າໝາຍທີ່ຈຳເປັນໃນການຊ່ວຍເຫຼືອຜູ້ປະສົບໄພພິບັດຕາມບູລິມະສິດຂອງອຳນາດການປົກຄອງແຂວງ ໂດຍໄດ້ ເຜີຍແຜ່ລິງຂ່າວໃຫ້ສັງຄົມຮັບຊາບ ຜ່ານຊ່ອງທາງຂ່າວ ໃນລະບົບ OneHeart ແລະ ຜ່ານຊ່ອງທາງສື່ອອນລາຍຂອງ ທຄຕລ ເພຈ໌ Facebook: BCEL Bank ແລະ OneHeart.la"




## ຂໍ້ມູນກ່ຽວກັບ BCEL One Heart

BCEL One Heart ແມ່ນຜະລິດຕະພັນໜຶ່ງທີ່ນຳໃຊ້ທ່າແຮງທາງດ້ານເທັກໂນໂລຢີ ແລະ ຄວາມທັນສະໄໝ ເປັນເຄື່ອງມືລະດົມທຶນຊ່ວຍເຫຼືອສັງຄົມໂດຍບໍ່ຫວັງຜົນຕອບແທນ, ມີຄວາມສະດວກທັງຜູ້ຂໍຮັບບໍລິຈາກ ແລະ ຜູ້ສະໝັກໃຈບໍລິຈາກ ສະດວກ, ວ່ອງໄວ ໂປ່ງໃສ ແລະ ກວດສອບໄດ້. BCEL One Heart ໄດ້ເລີ່ມນຳໃຊ້ແຕ່ເດືອນ 12 ປີ 2017 ເປັນຕົ້ນມາ ສາມາດເປັນສື່ກາງລະດົມທຶນຊ່ວຍທັງໝົດ **94 ໂຄງການ**, ຈຳນວນບໍລິຈາກ **78.516 ຄັ້ງ** ແລະ ສາມາດລະດົມທຶນ ຈຳນວນ **9,9 ຕື້ກວ່າກີບ**. ທ່ານສາມາດສະເໜີຂໍເປີດໂຄງການຕ່າງໆເພື່ອຊ່ວຍເຫຼືອເຊິ່ງກັນ ແລະ ກັນ ຜ່ານ BCEL One Heart ໄດ້ ພາຍໃຕ້ເງື່ອນໄຂ ໂຄງການຊ່ວຍເຫຼືອຜູ້ປະສົບໄພພິບັດ, ໂລກລະບາດ, ໂຄງການ ຊ່ວຍເຫຼືອປຸກສ້າງອາຄານຮຽນ-ຊື້ອຸປະກອນການສຶກສາ ໃຫ້ໂຮງຮຽນຊົນນະບົດຫ່າງໄກສອກຫຼີກ ແລະ ສະໜັບສະໜູນໃຫ້ທຶນການສຶກສາແກ່ຜູ້ທຸກຍາກດ້ອຍໂອກາດ ແລະ ອື່ນໆ"